International Trade Centre

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

ສະຫະພາບ ເອີຣົບ
European Union

# ໂຄງການຊ່ວຍເຫຼືອວຽກງານເຊື່ອມໂຍງພາກພື້ນອາຊຽນ: ໂຄງການສະໜັບສະໜູນຜູ້ເປັນແບບຢ່າງດ້ານຄຸນນະພາບ

## ໜັງສືເຊີນຍື່ນເອກະສານສະແດງຄວາມສົນໃຈ

---

- ➢ **ທ່ານເປັນຄົນໜຶ່ງທີ່ສົນໃຈໃນຄຸນນະພາບສິນຄ້າບໍ?**
- ➢ **ທ່ານໄດ້ເຮັດວຽກຢູ່ໃນຂະແໜງອຸດສາຫະກຳປຸງແຕ່ງໄມ້ ຫຼື/ແລະ ສິນຄ້າດ້ານກະສິກຳ (ເຊັ່ນ: ກາເຟ) ອັນໃດໜຶ່ງບໍ?**
- ➢ **ທ່ານມີຄວາມຫ່ວງໄຍຕໍ່ຊຸມຊົນທຸລະກິດລາວ ແລະ ຕ້ອງການຊ່ວຍເພື່ອໃຫ້ພວກເຂົາມີຄວາມຍືນຍົງບໍ?**
- ✓ **ຖ້າທ່ານຕອບວ່າ ແມ່ນແລ້ວ, ນີ້ແມ່ນໂອກາດຂອງທ່ານ ເພື່ອສະມັກເຂົ້າມາຮ່ວມໂຄງການ.**

**<u>ສະຫະພາບເອີຣົບ</u>** ໄດ້ໃຫ້ການສະໜັບສະໜູນທຶນແກ່ ໂຄງການຊ່ວຍເຫຼືອວຽກງານເຊື່ອມໂຍງພາກພື້ນອາຊຽນ (ARISE Plus Lao PDR ) ໂດຍມີຈຸດປະສົງເພື່ອ **ສົ່ງເສີມການຂະຫຍາຍຕົວດ້ານເສດຖະກິດ, ສ້າງຄວາມອາດສາມາດໃນການປັບໂຕຕໍ່ການປ່ຽນແປງດິນຟ້າອາກາດ, ຫຼຸດຜ່ອນຄວາມສ່ຽງຈາກໄພຄຸກຄາມ ແລະ ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນລາວ.** ໂຄງການເຮົາໄດ້ເນັ້ນໜັກໃສ່ການປັບປຸງສະພາບແວດລ້ອມທາງທຸລະກິດ ແລະ ການເຂົ້າຮ່ວມລະບົບຕ່ອງໂສ້ການຄ້າສາກົນ ໂດຍສະເພາະສຳລັບສອງຂະແໜງ ຄື **ປຸງແຕ່ງໄມ້ ແລະ ສິນຄ້າກະສິກຳ (ກາເຟ).** ໂຄງການຊ່ວຍເຫຼືອວຽກງານເຊື່ອມໂຍງພາກພື້ນອາຊຽນນີ້, ສູນການຄ້າສາກົນ (ITC) ເຊິ່ງເປັນອົງການໜຶ່ງທີ່ສ້າງຂຶ້ນໂດຍການຮ່ວມມືລະຫວ່າງ ອົງການການຄ້າໂລກ ແລະ ອົງການສະຫະປະຊາຊາດ, ຈະ**ໃຫ້ການສະໜັບສະໜູນໂດຍການປັບປຸງຄຸນນະພາບສິນຄ້າ ແລະ ການຈັດການ** ຂອງສອງຂະແໜງທຸລະກິດດັ່ງກ່າວ ເພື່ອໃຫ້ສອດຄ່ອງກັບມາດຕະຖານຄຸນນະພາບຂອງ EU ແລະ ປະເທດອື່ນໆ.

ໃນສ່ວນໜຶ່ງຂອງການສະໜັບສະໜູນຂອງໂຄງການນີ້ ແມ່ນ ການສ້າງ**ກຸ່ມຜູ້ເປັນແບບຢ່າງດ້ານຄຸນນະພາບ (QCs)** ເຊິ່ງຈະໄດ້ຮັບການຝຶກອົບຮົມດ້ານຄວາມຮູ້ຄວາມສາມາດຕ່າງໆໃຫ້ກາຍເປັນຄູຝຶກ, ເປັນທີ່ປຶກສາ ແລະ ຜູ້ແນະນຳທີ່ມີຄຸນວຸດທິ ທີ່ສາມາດໃຫ້ບໍລິການໃຫ້ກັບຫົວໜ່ວຍທຸລະກິດ ໂດຍຜ່ານສະຖາບັນຕ່າງໆ. ເມື່ອຮຽນຈົບຫຼັກສູດແລ້ວ ຜູ້ເຂົ້າຮ່ວມຈະໄດ້ຮັບໃບປະກາດລະດັບສາກົນ ແລະ ຈະສາມາດໃຫ້ການບໍລິການກວດສອບຄຸນນະພາບໃນຕໍ່ໜ້າ ທີ່ເອີ້ນວ່າ QCs. **ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ** ເປັນຜູ້ປະສານງານຫຼັກໃນການຈັດຕັ້ງປະຕິບັດໂຄງການນີ້ ໃນ ສປປ ລາວ.

QCs ຜູ້ແບບຢ່າງດ້ານຄຸນນະພາບ ມີໜ້າທີ່ໃນການຈັດການກິດຈະກຳຕ່າງໆທີ່ຕິດພັນກັບຄຸນນະພາບໃນທຸລະກິດ ແລະ ປັບປຸງຄຸນນະພາບສິນຄ້າ ແລະ ການບໍລິຫານ. ການຝຶກອົບຮົມນີ້ ຈະປະກອບດ້ວຍຫົວຂໍ້: **ຄວາມຮູ້ພື້ນຖານດ້ານການຈັດການຄຸນນະພາບ ເຕັກນິກການແກ້ໄຂບັນຫາ, ມາດຕະຖານພາຍໃນ, ຄວາມປອດໄພດ້ານອາຫານ ແລະ ສິນຄ້າ, ມາດຕະຖານການຄຸ້ມຄອງລະບົບບໍລິຫານສາກົນ 9001 (ISO 9001), ການ**

ໂຄງການພັດທະນາຜູ້ເປັນແບບຢ່າງດ້ານຄຸນນະພາບ:

- ຂໍ້ກຳນົດການເຂົ້າເຖິງຕະຫຼາດທີ່ມີຄວາມຈຳເປັນໃນສາກົນ ມາດຕະຖານຂໍ້ຕົກລົງຂອງອົງການການຄ້າໂລກ (WTO) ອຸປະສັກສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ ແລະ ສຸຂະນາໄມພືດ (TBT & SPS), ການຢັ້ງຢືນ, ການປະເມີນຄວາມສອດຄ່ອງ..
- ການຮັບປະກັນຄຸນນະພາບ, ການຄວບຄຸມ, ການປັບປຸງ, ການວາງແຜນ, ການຄຸ້ມຄອງ
- ວຽກງານດ້ານມາດຕະຖານ
- ການພັດທະນາດ້ານວັດທະນາທຳຄຸນນະພາບ
- ມາດຕະຖານການຄຸ້ມຄອງລະບົບບໍລິຫານສາກົນ 9001 (ISO 9001)

ການຈັດຕັ້ງການແກ້ໄຂບັນຫາ-ການຜະລິດແບບສົມບູນແບບ ທີ່ໄດ້ຄຸນນະພາບ ມາດຕະຖານ

ຄວາມປອດໄພດ້ານອາຫານ

ທັກສະຕ່າງໆ

- ທັດສະໃນການຝຶກອົບຮົມ
- ທັກສະໃນການໃຫ້ຄຳແນະນຳເປັນທີ່ປຶກສາ

ໂຄງການເສີມຂະຫຍາຍຄຸນນະພາບຂອງວິສາຫະກິດ

## ໂຄງການຊ່ວຍເຫຼືອວຽກງານເຊື່ອມໂຍງພາກພື້ນອາຊຽນ: ໂຄງການສະໜັບສະໜູນຜູ້ເປັນແບບຢ່າງດ້ານຄຸນນະພາບ

**ຜະລິດແບບສົມບູນແບບທີ່ໄດ້ຄຸນນະພາບມາດຕະຖານ (Lean Six Sigma Greenbelt), ທັກສະໃນການຝຶກອົບຮົມ ແລະ ໃຫ້ຄຳປຶກສາ.**

ໃນຫຼັກສູດການຮຽນ ຍັງລວມໄປເຖິງການຈັດຕັ້ງປະຕິບັດໂຄງການປັບປຸງຄຸນນະພາບຂອງວິສາຫະກິດຕ່າງໆ ພາຍໃຕ້ການແນະນຳຂອງຊ່ຽວຊານຕ່າງປະເທດ. ໂຄງການປັບປຸງຄຸນນະພາບທີ່ກ່າວມານີ້ ແມ່ນເນັ້ນໃສ່ປະຕິບັດຕາມຄວາມສອດຄ່ອງຂອງເງື່ອນໄຂຂອງຕະຫຼາດສົ່ງອອກ ແລະ ມາດຕະຖານສະເພາະ.

ເມື່ອຜ່ານການຮັບຮອງແລ້ວ ຜູ້ເປັນແບບຢ່າງດ້ານຄຸນນະພາບ ຈະເປັນສ່ວນໜຶ່ງໃນເຄືອຂ່າຍຄຸນນະພາບລະດັບສາກົນ ຂອງສູນການຄ້າສາກົນ ITC ແລະ ຊີວະປະຫວັດຂອງທ່ານຈະໄດ້ຮັບການເຜີຍແຜ່ທາງສື່ອອນລາຍໃນເວທີດ້ານຄຸນນະພາບຂອງ ສປປ ລາວ.

### ອົງປະກອບສຳຄັນຂອງໂຄງການຜູ້ເປັນແບບຢ່າງດ້ານຄຸນນະພາບ:

1. ທີມງານດ້ານຄຸນນະພາບ **ຈະປະກອບດ້ວຍຜູ້ເປັນແບບຢ່າງດ້ານຄຸນນະພາບສູງສຸດຈຳນວນ 20 ທ່ານ** ໂດຍຈະໄດ້ຮັບການຄັດເລືອກຈາກພາກລັດ ແລະ ເອກະຊົນ **ຜ່ານຂັ້ນຕອນການສະໝັກ ແລະ ການຄັດເລືອກ**. ສຳລັບຜູ້ທີ່ເຮັດວຽກ ຫຼື ມີປະສົບການທີ່ກ່ຽວຂ້ອງ ອາດໄດ້ຮັບການພິຈາລະນາເປັນພິເສດເພື່ອເຮັດວຽກຮ່ວມກັນໃນໄລຍະຍາວ.

2. ໂຄງການສະໜັບສະໜູນຜູ້ເປັນແບບຢ່າງດ້ານຄຸນນະພາບ ຈະໃຊ້ເວລາປະມານ **12-15 ເດືອນ** ໃນນີ້ລວມມີ**ການສຳມະນາ ທາງດ້ານວິຊາການແບບໄລຍະສັ້ນ ຢູ່ 5 ຄັ້ງ** ໂດຍມີການມອບໝາຍກິດຈະກຳ ຫຼື ວຽກບ້ານ ໃນລະຫວ່າງການເຂົ້າຮ່ວມສຳມະນາ ແລະ ການຈັດຕັ້ງປະຕິບັດ**ໂຄງການປັບປຸງຄຸນນະພາບ** ໃນບໍລິສັດປຸງແຕ່ງ ຫຼື ຂະແໜງການທີ່ຄ້າຍຄືກັນ

3. ຜູ້ເປັນແບບຢ່າງທາງດ້ານຄຸນນະພາບ (QCs) ຈະໄດ້ຮັບການຝຶກອົບຮົມກ່ຽວກັບການນຳໃຊ້ເຄື່ອງມື ແລະ ເຕັກນິກຕ່າງໆເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພດ້ານອາຫານໃນທຸລະກິດ ແລະ ສ້າງຄວາມຕ້ອງການຂອງສາກົນເຂົ້າໃນການດຳເນີນງານ. ພວກເຂົາຈະໄດ້ຮັບການແນະນຳ ແລະ ນຳພາໂດຍລວມ ໂດຍຊ່ຽວຊານຕ່າງປະເທດ.

4. ໂຄງການປັບປຸງຄຸນນະພາບ ທີ່ຈັດຕັ້ງປະຕິບັດໂດຍຜູ້ເຂົ້າຮ່ວມຝຶກອົບຮົມ ເຊິ່ງເປັນສ່ວນໜຶ່ງໃນຫຼັກສູດທີ່ຈະໄດ້ຮັບໃບຢັ້ງຢືນ ຈະໄດ້ສຸມໃສ່ສະເພາະ**ການປະຕິບັດຕາມຂໍ້ກຳນົດດ້ານຄຸນນະພາບ ແລະ ຄວາມປອດໄພດ້ານອາຫານທີ່ທາງສະຫະພາບເອີຣົບໄດ້ກຳນົດອອກ** ແລະລວມທັງມີພາກຝຶກສອນ ແລະ ມີການໃຫ້ຄຳແນະນຳ ແລະ ຊ່ວຍເຫຼືອ.

5. ເມື່ອຜ່ານການຮັບຮອງການເປັນແບບຢ່າງທາງດ້ານຄຸນນະພາບແລ້ວ ທ່ານຈະກາຍເປັນຜູ້ຊ່ຽວຊານດ້ານຄຸນນະພາບຂອງລາວ ໂດຍສາມາດຈັດຝຶກອົບຮົມ ແລະ ຈັດຕັ້ງປະຕິບັດໂຄງການປັບປຸງຄຸນນະພາບໄດ້ ໂດຍສາມາດໃຫ້ການຝຶກອົບຮົມໃຫ້ແກ່ໜ່ວຍງານອື່ນໆ ດ້ວຍຕົນເອງ ໂດຍທີ່ບໍ່ຕ້ອງການຊ່ຽວຊານພາຍນອກ.

### ຜູ້ສະໝັກຕ້ອງມີເງື່ອນໄຂດັ່ງຕໍ່ໄປນີ້:

- ມີປະສົບການທາງດ້ານວິຊາສະເພາະ ຢ່າງໜ້ອຍ 5 ປີ ໃນການຄຸ້ມຄອງຄຸນນະພາບ, ການຄຸ້ມຄອງການຜະລິດ, ການປຸງແຕ່ງກະສິກຳ, ການປຸງແຕ່ງໄມ້, ການສົ່ງອອກຜະລິດຕະພັນກະສິກຳ ຫຼື ຜະລິດຕະພັນໄມ້, ຄວາມປອດໄພດ້ານອາຫານ ຫຼື ຂະແໜງອື່ນໆທີ່ກ່ຽວຂ້ອງ.
- ຖ້າມີປະສົບການຕ່ຳກວ່າ 5 ປີ, ຕ້ອງຈົບການສຶກສາລະດັບປະລິນຍາຕີຂຶ້ນໄປໃນສາຂາທີ່ກ່ຽວຂ້ອງ (ເຊັ່ນ: ຂະແໜງວິທະຍາສາດ, ກະສິກຳ, ການບໍລິຫານທຸລະກິດ, ວິສະວະກຳ, ວິທະຍາສາດດ້ານອາຫານ, ເຕັກໂນໂລຊີດ້ານອາຫານ, ການບໍລິຫານຄຸນນະພາບ ຫຼື ທຽບເທົ່າ).
- ມີຄວາມຄຸ້ນເຄີຍໃນການໃຊ້ Word, PowerPoint and Excel ເປັນຢ່າງດີ.

ໂຄງການຊ່ວຍເຫຼືອວຽກງານເຊື່ອມໂຍງພາກພື້ນອາຊຽນ: ໂຄງການສະໜັບສະໜູນຜູ້ເປັນແບບຢ່າງດ້ານຄຸນນະພາບ

- ມີຄວາມສາມາດໃນການສື່ສານເປັນພາສາອັງກິດ
- ສາມາດສະຫຼະເວລາໃນການຝຶກອົບຮົມ ສະເລ່ຍ 4 ວັນຕໍ່ເດືອນ ໃນໄລຍະເວລາ 1 ປີ ໃນນັ້ນ 50% ຈະເປັນຊ່ວງເວລາໃນໂມງວຽກທາງການ.
- ມີຄວາມຕັ້ງໃຈທີ່ຈະເປັນສ່ວນໜຶ່ງຂອງເຄືອຂ່າຍຂອງຄູຝຶກ ແລະ ທີ່ປຶກສາ ເພື່ອຊ່ວຍເຫຼືອຄົນອື່ນໃຫ້ມີການພັດທະນາ ໂດຍການເຮັດໜ້າທີ່ເປັນຄູຝຶກຜູ້ທີ່ມີຄວາມຊ່ຽວຊານ ແລະ ເປັນທີ່ປຶກສາ ໄລຍະຍາວ ໃນຖານະເປັນຜູ້ໃຫ້ການບໍລິການທີ່ເປັນຄົນພາຍໃນປະເທດ.

**ການຝຶກອົບຮົມທັງໝົດ ແມ່ນບໍ່ໄດ້ເສຍຄ່າໃຊ້ຈ່າຍ.** ຖ້າມີການເດີນທາງໄກເພື່ອເຂົ້າຮ່ວມຝຶກອົບຮົມ, ໂຄງການຈະຮັບຜິດຊອບຄ່າໃຊ້ຈ່າຍໃນການເດີນທາງ ແລະ ກິນຢູ່ພັກເຊົາ ໂດຍອີງໃສ່ອັດຕາພາຍໃນປະເທດ ແຕ່ໂຄງການຈະບໍ່ຮັບຜິດຊອບ ຄ່າໃຊ້ຈ່າຍໃດໆ ນອກເໜືອຈາກທີ່ໄດ້ກ່າວມາຂ້າງເທິງນີ້ ໃນຕະຫຼອດການເຂົ້າຮ່ວມຝຶກອົບຮົມ.

ສໍາລັບຂໍ້ມູນລາຍລະອຽດເພີ່ມເຕີມ ກະລຸນາຕິດຕໍ່:

*Ms. Kinnaphone Sounthongdeng, National Project Officer, ARISE Plus Lao PDR*
*National Implementation Unit (NIU), Ministry of Industry and Commerce (MoIC)*
*E-mail: kinnaphone.sounthongdeng@intracen.org; Tel: 020 2223 2461*

*Ms. Margareta Funder von Kirchbach, Officer, Export Quality Management*
*International Trade Centre, Geneva, Switzerland*
*Email: funder@intracen.org*

ໂຄງການຊ່ວຍເຫຼືອວຽກງານເຊື່ອມໂຍງພາກພື້ນອາຊຽນ: ໂຄງການສະໜັບສະໜູນຜູ້ເປັນແບບຢ່າງດ້ານຄຸນນະພາບ

**ແບບຟອມສະໝັກ**

**ກະລຸນາຕື່ມລາຍລະອຽດໃສ່ໃນແບບຟອມນີ້ເປັນ ພາສາອັງກິດເທົ່ານັ້ນ ແລ້ວສົ່ງອີເມວຫາ** *kinnaphone.sounthongdeng@intracen.org;* **ພາຍໃນວັນທີ 15 ກໍລະກົດ 2020**

ກະລຸນາສົ່ງແບບຟອມສະໝັກຂອງທ່ານເປັນຟາຍ **PDF ຟາຍດຽວ**, ກະລຸນາໃສ່ຊື່ຟາຍຂອງທ່ານດັ່ງນີ້: "Lao PDR QC application your full name"

**ຜູ້ສະໝັກທີ່ຖືກຄັດເລືອກຈະຖືກເອີ້ນເຂົ້າສຳພາດເຊິ່ງເປັນສ່ວນໜຶ່ງຂອງຂະບວນການຄັດເລືອກ**

---

**ຂໍ້ມູນທົ່ວໄປ:**

| | |
|---|---|
| ຊື່ ແລະ ນາມສະກຸນ: | |
| ວັນເດືອນປີເກີດ: | |
| ສັນຊາດ: | |

**ລາຍລະອຽດການຕິດຕໍ່:**

| | |
|---|---|
| ບ້ານຢູ່ປະຈຸບັນ: | |
| ເມືອງ ແລະ ແຂວງ: | |
| ເບີໂທລະສັບ: | |
| ທີ່ຢູ່ ອີເມວ: | |
| ທີ່ຢູ່ Skype (ຖ້າມີ): | |

**ການສຶກສາ:**

| ສະຖາບັນ | ລະດັບການສຶກສາ ແລະ ຄຸນວຸດທິທີ່ໄດ້ຮັບ | ຄວາມຊຳນານ |
|---|---|---|
| | | |
| | | |
| | | |

**ການຝຶກອົບຮົມທີ່ຜ່ານມາ:**

| ຫລັກສູດການຝຶກອົບຮົມ | ວັນທີ | ສະຖາບັນຝຶກອົບຮົມ |
|---|---|---|
| | | |
| | | |
| | | |

**ປະສົບການການເຮັດວຽກ ເລີ່ມຕົ້ນຈາກປະຈຸບັນ**

| ໄລຍະເວລາ | ອົງການບ່ອນເຮັດວຽກ ແລະ ຂໍ້ມູນການຕິດຕໍ່ຜູ້ອ້າງອີງ | ຕຳແໜ່ງ | ສະຫລຸບກິດຈະກຳທີ່ໄດ້ເຮັດ ແລະ ຮັບຜິດຊອບ |
|---|---|---|---|
| | | | |
| | | | |

## ໂຄງການຊ່ວຍເຫຼືອວຽກງານເຊື່ອມໂຍງພາກພື້ນອາຊຽນ: ໂຄງການສະໜັບສະໜູນຜູ້ເປັນແບບຢ່າງດ້ານຄຸນນະພາບ

| | | | |
|---|---|---|---|
| | | | |
| | | | |
| | | | |
| | | | |

ທ່ານເປັນສະມາຊິກໃນສະມາຄົມວິຊາຊີບໃດບໍ (ຖ້າມີ)

| ຊື່ສະມາຄົມວິຊາຊີບ | ໝາຍເລກອ້າງອີງ (ຖ້າມີ) |
|---|---|
| | |
| | |
| | |

ຄວາມສາມາດດ້ານພາສາ (5-ດີຫລາຍ,1-ໃຊ້ບໍ່ໄດ້)

| ພາສາ | ການອ່ານ | ການຂຽນ | ການເວົ້າ |
|---|---|---|---|
| | | | |
| | | | |
| | | | |
| | | | |

ໃຊ້ພື້ນທີ່ດ້ານລຸ່ມເພື່ອອະທິບາຍຄວາມຊ່ຽວຊານຂອງທ່ານທີ່ມີຄວາມກ່ຽວຂ້ອງກັບແຜນງານນີ້

ກະລຸນາລະບຸປະສົບການຕ່າງໆ ໃນການເປັນຄູຝຶກ ແລະ ເປັນທີ່ປຶກສາອື່ນໆ (ຖ້າມີ)

ປະຈຸບັນທ່ານໄດ້ເຮັດວຽກພິເສດກັບນາຍຈ້າງອື່ນໆ ນອກເໜືອຈາກນາຍຈ້າງຂອງທ່ານ (ເຊັ່ນ: ການເຮັດວຽກຊົ່ວຄາວ, ການຝຶກອົບຮົມ ນອກໂມງວຽກໃນເວລາຕອນແລງ, ການໃຫ້ບໍລິການເປັນທີ່ປຶກສາອື່ນໆ) ກະລຸນາອະທິບາຍບົດບາດໜ້າທີ່ຂອງທ່ານທີ່ທ່ານມີສ່ວນຮ່ວມໃນວຽກດັ່ງກ່າວ

ກະລຸນາອະທິບາຍກ່ຽວກັບວຽກງານ 'ດ້ານຄຸນນະພາບ' ໃດໜຶ່ງທີ່ທ່ານໄດ້ມີສ່ວນຮ່ວມຜ່ານມາ ທີ່ທ່ານອາດເປັນຜູ້ລິເລີ່ມ ຫລື ໄດ້ມີຮ່ວມໂດຍກົງ

ທ່ານຄິດວ່າແມ່ນຫຍັງເປັນສິ່ງທີ່ທ້າທາຍສໍາລັບຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ ໃນການສົ່ງອອກ ຫຼື ມີຈຸດປະສົງທີ່ຈະສົ່ງອອກສິນຄ້າ? ທ່ານສາມາດອະທິບາຍສິ່ງທີ່ທ່ານຄິດວ່າເປັນສິ່ງທີ່ທ້າທາຍຈາກປະສົບການຕົວຈິງຂອງທ່ານ ຫຼື ສິ່ງທີ່ທ້າທາຍໂດຍທົ່ວໄປທີ່ທ່ານຮັບຮູ້. ຖ້າທ່ານສົນໃຈທີ່ຈະອະທິບາຍເພີ່ມຕື່ມ ທ່ານສາມາດອະທິບາຍກ່ຽວກັບ ຂໍ້ສະເໜີແນະວິທີການແກ້ໄຂ ຫຼື ຄວາມຄິດເຫັນຕ່າງໆທີ່ທ່ານຄິດວ່າສາມາດນໍາມາແກ້ໄຂສິ່ງທ້າທາຍດັ່ງກ່າວ

ກະລຸນາອະທິບາຍເຫດຜົນຫລັກທີ່ເຮັດໃຫ້ທ່ານຕ້ອງການເຂົ້າຮ່ວມກັບໂຄງການນີ້

ກະລຸນາອະທິບາຍຄວາມຕັ້ງໃຈຂອງທ່ານໃນການເຮັດໜ້າທີ່ເປັນຄູຝຶກ, ເປັນຜູ້ໃຫ້ຄໍາປຶກສາ ໃນໄລຍະຍາວ ຜ່ານຜູ້ໃຫ້ບໍລິການລະດັບຊາດ ລວມໄປເຖິງເລື່ອງເວລາທີ່ມີ, ຂໍ້ຈໍາກັດສະເພາະເຈາະຈົງ ແລະ ອື່ນໆ

ຂ້າພະເຈົ້າຂໍຢັ້ງຢືນວ່າຂໍ້ມູນຕ່າງໆ ທາງດ້ານຄວາມຮູ້ ຄວາມສາມາດ ແລະ ປະສົບການທີ່ຂ້າພະເຈົ້າກ່າວມາຂ້າງເທິງນັ້ນແມ່ນຄວາມຈິງທຸກປະການ ແລະ ຂ້າພະເຈົ້າຂໍຢືນຢັນວ່າຂ້າພະເຈົ້າມີເວລາເຕັມທີ່ໃນການເຂົ້າຝຶກອົບຮົມ ແລະ ເຂົ້າຮ່ວມກິດຈະກຳເພື່ອສົ່ງເສີມສະໜັບສະໜູນວິສາຫະກິດ. ຂ້າພະເຈົ້າຮັບຮູ້ວ່າ ຖ້າສິ່ງທີ່ຂ້າພະເຈົ້າໃຫ້ຂໍ້ມູນມາຂ້າງເທິງນັ້ນບໍ່ເປັນຄວາມຈິງ ຂ້າພະເຈົ້າຈະຖືກຕັດສິດໃນການສະໝັກຄັ້ງນີ້ຢ່າງເປັນທາງການ

ຊື່ ແລະ ນາມສະກຸນຜູ້ສະໝັກ ລາຍເຊັນ ວັນທີ